ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 100 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 30 JUN 2026

# ແຈ້ງການ

ເຖິງ: ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7

ເລື່ອງ: ການສະໝັກສອບເສັງລະດັບຊາດ ສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ການຕົກລົງເຫັນດີ ແລະ ເປັນເອກະພາບ ຂອງຄະນະກຳມະການວິຊາຊີບພະຍາບານ ແລະ ຜະດຸງຄັນ.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະຈັດການສອບເສັງລະດັບຊາດ ສຳລັບພະຍາບານ ແລະ ຜະດຸງຄັນ ຄັ້ງທີ 7, ຊຶ່ງຈະຈັດຂຶ້ນ ທີ່ ຄະນະພະຍາບານສາດ ມວສ , ວິທະຍາໄລ ວິທະຍາສາດສຸຂະພາບ ຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ ແລະ ໂຮງຮຽນສາທາລະນະສຸກ ອຸດົມໄຊ, ວຽງຈັນ, ຄຳມ່ວນ ແລະ ສາລະວັນ. ດັ່ງນັ້ນ, ຈຶ່ງແຈ້ງໃຫ້ຜູ້ທີ່ຮຽນທີ່ຈົບພະຍາບານ ແລະ ຜະດຸງຄັນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບແຕ່ ປີ 2020-2026. ພະຍາບານ ແລະ ຜະດຸງຄັນ ທີ່ຍັງບໍ່ໄດ້ສອບເສັງ. ພະຍາບານ ແລະ ຜະດຸງຄັນ ຜູ້ທີ່ສອບເສັງບໍ່ຜ່ານຄັ້ງຜ່ານ ໃຫ້ມາສະໝັກສອບເສັງ ຊຶ່ງມີລາຍລະອຽດ ແລະ ຂັ້ນຕອນດັ່ງນີ້:

1. ດາວໂຫຼດແບບຟອມຄຳຮ້ອງສະໝັກສອບເສັງໄດ້ທີ່: hpc.gov.la/la/nurse/examination;
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍພ້ອມຜ່ານທາງ QR code ທີ່ມີຢູ່ທ້າຍແບບຟອມ (ຖ້າບໍ່ລົງທະບຽນອອນລາຍຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງແບບຟອມຄຳຮ້ອງສະໝັກສອບເສັງ ແລະ ຮັບບັດເຂົ້າຫ້ອງສອບເສັງ ໄດ້ທີ່ຄະນະພະຍາບານສາດ ມວສ, ວິທະຍາໄລ ວິທະຍາສາດສຸຂະພາບ ຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ ແລະ ໂຮງຮຽນສາທາລະນະສຸກ ອຸດົມໄຊ , ວຽງຈັນ, ຄຳມ່ວນ ແລະ ສາລະວັນ ແຕ່ວັນທີ 06 ກໍລະກົດ 2026 ຫາ 30 ກັນຍາ 2026;
4. ສຳລັບ ວັນທີ ແລະ ເວລາ ຮັບບັດເຂົ້າຫ້ອງສອບເສັງຈະມີແຈ້ງການຕື່ມອີກ;
5. ຄ່າລົງທະບຽນສະໝັກສອບເສັງ ແມ່ນ 250,000 ກີບ/ຄົນ/ຄັ້ງ ຊຶ່ງຈ່າຍຕອນທີ່ສົ່ງແບບຟອມຄຳຮ້ອງສະໝັກສອບເສັງ;
6. ໃນມື້ມາສອບເສັງ ໃຫ້ນັກສອບເສັງປະຕິບັດຕາມລະບຽບການທີ່ກຳນົດໄວ້ ຄື:
   - ສຳລັບ ຜູ້ຊາຍນຸ່ງເສື້ອຂາວ ຄໍເຊີດ ແລະ ໃສ່ໂສ້ງຂາຍາວ ສີດຳ ຫຼື ສີກົມມະທາດ;
   - ສຳລັບ ຜູ້ຍິງນຸ່ງເສື້ອຂາວ ຄໍເຊີດ ແລະ ໃສ່ສິ້ນສີດຳ ຫຼື ສີກົມມະທາດ;
7. ຖ້າມີຂໍ້ມູນສອບຖາມເພີ່ມເຕີມ ສາມາດປະສານໄປຫາສູນສອບເສັງທີ່ຕົນສະໝັກສອບເສັງໄດ້.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທຳມະວົງ